ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຜົ້ງສາລີ

ເຈົ້າແຂວງ

ເລກທີ 8 /ຈຂ.ຜລ

ຜົ້ງສາລີ,ວັນທີ 28 ຕຸລາ2011

# ຄຳສັ່ງແນະນຳ

## ຂອງເຈົ້າແຂວງວ່າດ້ວຍການເພີ່ມທະວີ

## ການສ້າງຂະບວນການຮັກສາຄວາມສະອາດຈົບງາມໃນທົ່ວແຂວງ

**ເຖິງ :** ທົ່ວໜ້າພະແນກການ, ອົງການການທຽບເທົ່າ, ເຈົ້າເມືອງ ແລະ ອົງການຈັດຕັ້ງ ສັງຄົມພາຍໃນແຂວງ.

**ເລື່ອງ :** ສ້າງຂະບວນການລວມຂອງທົ່ວສັງຄົມ ເພື່ອເຮັດອະນາໄມ ແລະ ຮັກສາຄວາມສະອາດຈົບງາມ.

ໃນໄລຍະຜ່ານມາສຳນັກງານ ແລະ ອົງການປົກຄອງແຕ່ລະຂັ້ນ ກໍ່ໄດ້ພະຍາຍາມນຳພາສ້າງຂະບວນການຮັກສາຄວາມສະອາດຈົບງາມໃນຂອບເຂດຂອງຕົນຮັບຜິດຊອບໂດຍຕິດພັນກັບຂະບວນການການສ້າງໜ່ວຍພັກແຂງຮູ້ນຳພາຮອບດ້ານ ແລະ ການສ້າງບ້ານພັດທະນາບ້ານດ້ວຍຄວາມພະຍາຍາມໂດຍນຳໃຊ້ກຳລັງແຮງສັງລວມນັບທັງອົງການຈັດຕັ້ງມະຫາຊົນເຮັດໃຫ້ສຳນັກງານ,ອົງການ ສະຖານທີ່ສາທາລະນະ,ບ້ານແລະກຸ່ມບ້ານມີຄວາມສະອາດຈົບງາມເປັນກ້າວໆ. ແຕ່ກໍ່ຍັງສັງເກດເຫັນວ່າ ສະຖານທີ່ສຳນັກງານ,ອົງການ,ຫ້ອງການ,ໂຮງຮຽນ, ສະຖານທີ່ສາທາລະນະຕ່າງໆ,ກຸ່ມບ້ານແລະ ບັນດາໝູ່ບ້ານສ່ວນຫຼາຍຍັງມີ ຄວາມຮົກເຮື້ອເປິະເປື້ອນ, ເຊິ່ງເປັນໜ້າລັງກຽດໃຫ້ແກ່ສັງຄົມ ແລະ ແຂກຄົນຜູ້ມາທ່ອງທ່ຽວ,ຄຽງຄູ່ກັນນັ້ນເປັນສາຍເຫດທີ່ພາໃຫ້ເກີດມີການແຜ່ລະບາດພະຍາດຕ່າງໆເຊັ່ນ: ໄຂ້ຍຸງ,ຖອກທ້ອງ,ຕຸ່ມແດງ,ອະຫິວາ, ພະຍາດຕາແດງ, ໄຂ້ຫວັດໃຫຍ່, ວັນນະໂລກ ແລະ ອື່ນໆ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ - ສັງ ຄົມເວົ້າລວມ,ຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າເວົ້າສະເພາະ. ແຕ່ບັນດາ ອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມ ຕະຫຼອດຮອດປະຊາຊົນບັນດາເຜົ່າຢູ່ຫຼາຍບ່ອນຍັງບໍ່ທັນມີວິທີການແລະມາດຕາການ ໃນວຽກງານ ຮັກສາຄວາມສະອາດຈົບງາມຢ່າງເປັນເຈົ້າການ.

ດັ່ງນັ້ນ ເພື່ອເຮັດທົ່ວສັງຄົມມີຄວາມຮັບຮູ້,ເປັນເອກະພາບໃນການເຮັດອະນາໄມ ແລະ ຮັກສາຄວາມສະອາດຈົບງາມ ກາຍເປັນໜ້າທີ່ຂອງທົ່ວປວງຊົນ ແລະ ເປັນຂະບວນການລວມຂອງທົ່ວສັງຄົມ,ເຮັດໃຫ້ທົ່ວແຂວງຜົ້ງສາລີມີຄວາມສະອາດຈົບງາມ.

## ເຈົ້າແຂວງອອກຄຳສັ່ງແນະນຳດັ່ງນີ້ :

I. ຈຸດປະສົງ.

1. ເພື່ອເຮັດໃຫ້ທົ່ວສັງຄົມຮັບຮູ້,ເຂົ້າໃຈ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ວຽກງານອະນາໄມ ເຮັດໃຫ້ສຳນັກງານ, ອົງການ,ເຮືອນຊານບ້ານຊ່ອງ,ຖະໜົນຫົນທາງ,ສະຖານທີ່ສາທາລະນະຕ່າງໆໃນທົ່ວແຂວງ ມີຄວາມສະອາດຈົບງາມ ເປັນໜ້າຢູ່ ແລະ ເປັນສິ່ງຈູງໃຈດຶງດູດແຂກຄົນເຂົ້າມາທ່ຽວຊົມ.

2. ເພື່ອປູກຈິດສຳນຶກ ແລະ ຄວາມຮັບຮູ້ໃຫ້ແກ່ອະນຸຊົນ,ເຍົາວະຊົນ,ນັກຮຽນ ຜູ້ເກີດໃໝ່ໃຫ້ຍລຸນ ຮູ້ຮັກສາອະນາໄມ,ຮູ້ຄວາມສະອາດຈົບງາມ,ຮູ້ຮັກບ້ານເກີດເມືອງນອນ ແລະ ເຮັດໃຫ້ສິ່ງແວດລ້ອມທັງທຳມະຊາດແລະສັງຄົມໄດ້ຮັບການອະນຸລັກປົກປັກ ຮັກສາແບບຍືນຍົງ.

II. ຄວາມໝາຍຄວາມສຳຄັນຂອງການຮັກສາຄວາມສະອາດຈົບງາມ.

ການຮັກສາຄວາມສະອາດຈົບງາມ ແມ່ນໜຶ່ງໃນວັດທະນະທຳອັນດີງາມຂອງມະນຸດກໍ່ຄືຂອງປະຊາຊົນລາວ ແລະຊາວແຂວງຜົ້ງສາລີພວກເຮົາ, ການຮັກສາ ຄວາມສະອາດຈົບງາມ ໝາຍເຖິງການກຳຈັດ ສິ່ງທີ່ເປິະເປື້ອນ, ເໝົ່າເໝັນ,ສິກກະປົກແລະບໍ່ຈົບ ງາມເປັນໜ້າເບື່ອໜ່າຍ ແລະ ລັງກຽດຂອງສັງຄົມ, ແມ່ນການຕົບແຕ່ງ ຄືນໃຫ້ສະອາດຈົບງາມກວ່າເກົ່າ. ການຮັກສາຄວາມສະອາດ ເປັນໜຶ່ງໃນມາດຕາການ ໃນການສະກັດກັ້ນແລະຕ້ານການລະບາດຂອງ ພະຍາດຊະນິດຕ່າງໆ, ທັງ ເປັນການປະຫຍັດ ງົບປະມານເຂົ້າໃນການປິ່ນປົວສຸຂະພາບ ແລະ ການປົກຮັກສາສະພາບແວດລ້ອມທຳມະຊາດ-ສັງຄົມອີກດ້ວຍ . ການອອກແຮງງານເຂົ້າໃນການຮັກສາຄວາມສະອາດຈົບງາມ ເປັນພັນທະໜຶ່ງ ຂອງຄົນໃນສັງຄົມ ແລະ ເປັນການປະກອບ ສ່ວນອັນສຳຄັນ ເຂົ້າໃນຂະບວນການລວມຂອງການປົກປັກຮັກສາແລະ ສ້າງສາພັດທະນາປະເທດຊາດໃຫ້ມີ ຄວາມຈະເລີນຮຸ່ງເຮືອງເລື້ອຍໆໄປ.

III. ສະຖານທີ່ສຳລັບການຮັກສາຄວາມສະອາດຈົບງາມ.

1. ສະນັກງານອົງການ,ຫ້ອງການ ຂອງອົງການຈັດຕັ້ງພັກ-ລັດ,ອົງການຈັດຕັ້ງສັງຄົມ,ລັດວິສາຫະກິດ,ຫົວໜ່ວຍທຸລະກິດ.
2. ໂຮງຮຽນ,ໂຮງໝໍ,ສຸກສາລາເຂດ,ຄິວລົດ,ໂຮງແຮມ, ເຮືອນພັກ,ຮ້ານອາຫານ,ຮ້ານບັນເທີງ.
3. ບ້ານ,ເດີ່ນບ້ານ,ແຄມເຮືອນ,ໃນເຮືອນ.
4. ຖະໜົນ,ຫົນທາງ,ຮ່ອງລະບາຍນ້ຳ,ຮ່ອງນ້ຳເສຍ ແລະ ດິນຈັບຈ່ອງຢູ່ແຄມທາງໃນບ້ານ ຫຼື ໃນເທດສະບານແຂວງ,ເມືອງ.
5. ສະຖານທີ່ລວມຂອງບ້ານ,ສະຖານທີ່ສາທາລະນະປະໂຫຍດ.
6. ສະຖານທີ່ດ່ານສາກົນ,ດ່ານປະເພນີ,ສຳນັກງານໂຄງການ ແລະ ອື່ນໆ .

IV. ກິດຈະກຳຂອງການຮັກສາຄວາມສະອາດຈົບງາມ.

1. ອະນາໄມສິ່ງສິກກະປົກ ແລະ ຮົກເຮື້ອ. ດ້ວຍວິທີການອະນາໄມ ຢູ່ຕາມບໍລິເວນເດີ່ນ, ຮ່ອງລະບາຍນ້ຳຂອງສຳນັກງານ,ຫ້ອງການແລະຢູ່ຕາມແຄມເຮືອນໃຫ້ສະອາດຈົບງາມ).
2. ການຕົບແຕ່ງປະດັບປະດາ ດ້ວຍຮູບການຕ່າງໆ ເຊັ່ນ: ສ້າງຂະບວນການປູກດອກໄມ້, ຕົບແຕ່ງຕົ້ນໄມ້ປະດັບຢູ່ຕາມສຳນັກງານ,ສະຖານທີ່ ສັງຄະລະບູສາ ແລະ ຢູ່ຕາມແຄມເຮືອນ.
3. ກຳຈັດນ້ຳຂັງ, ນ້ຳເປື້ອນ. ດ້ວຍວິທີການ ອະນາໄມ ຢູ່ຕາມຮ່ອງລະບາຍນ້ຳ ໃຫ້ສະອາດ ເພື່ອເຮັດໃຫ້

ການໄຫຼຂອງນ້ຳເສຍເປັນປົກກະຕິ.

4. ບໍ່ຈູດຂີ້ເຫຍື້ອທີ່ມີທາດຢາງ . ແຍກຂີ້ເຫຍື້ອ ປະເພດຕ່າງໆ ເຊັ່ນ : ຄວນມີຖົງບັນຈຸ ສະເພາະຂີ້ເຫຍື້ອ ທີ່ເປັນໂລຫະ ຫຼືເປັນຖົງຢາງໄວ້ບ່ອນດຽວ ແລະ ບັນຈຸຖົງຂີ້ເຫຍື້ອອື່ນໆໄວ້ຕ່າງຫາກ.

**+ ການແບ່ງຄວາມຮັບຜິດຊອບໃນການຮັກສາຄວາມສະອາດຈົບງາມ.**

1. ສຳລັບສະນັກງານອົງການ,ຫ້ອງການ ຂອງອົງການຈັດຕັ້ງພັກ-ລັດ,ອົງການຈັດຕັ້ງສັງຄົມ ແມ່ນມອບໃຫ້ຜູ້ເປັນເຈົ້າຂອງສະຖານທີ່ດັ່ງກ່າວ ເປັນຜູ້ຮັບຜິດຊອບ. ຖ້າພົວພັນເຖິງ ຫຼາຍຫ້ອງການ, ຫຼາຍຂະແໜງການ ກໍ່ໃຫ້ມີການປະສານສົມທົບແບ່ງຄວາມຮັບຜິດຊອບນຳກັນ.
2. ສຳລັບໂຮງຮຽນ,ໂຮງໝໍ,ສຸກສາລາເຂດ,ຄິວລົດ, ໂຮງແຮມ, ເຮືອນພັກ,ຮ້ານອາຫານ,ຮ້ານບັນເທີງ ແມ່ນມອບໃຫ້ຄະນະອຳນວຍການໂຮງໝໍ,ໂຮງຮຽນ,ສຸກສາລາເຂດ, ຜູ້ສຳປະທານຄິວລົດ, ເຈົ້າຂອງກິດຈະການເປັນຜູ້ຮັບຜິດຊອບ.
3. ສຳລັບຖະໜົນຫົນທາງ,ຮ່ອງລະບາຍນ້ຳ,ຮອງນ້ຳເສຍ,ເດີ່ນບ້ານ,ຫ້ອງການບ້ານ, ດົນຈັບຈ່ອງຕາມແຄມທາງ ແລະ ສະຖານທີ່ສາທາລະນະປະໂຫຍດ ພາຍໃນບ້ານ ແມ່ນມອບໃຫ້ ນາຍບ້ານເປັນຜູ້ຮັບຜິດຊອບ.
4. ສຳລັບສະຖານທີ່ແຄມເຮືອນ,ຕໍ່ໜ້າເຮືອນ ແມ່ນມອບໃຫ້ເຈົ້າຂອງເຮືອນ ຫຼື ຜູ້ນຳໃຊ້ ເປັນຜູ້ຮັບຜິດຊອບ.
5. ສຳລັບຫ້ອງການກຸ່ມບ້ານ ແມ່ນມອບໃຫ້ ຄະນະພັກກຸ່ມບ້ານ ແລະ ພະນັກງານປະຈຳກຸ່ມບ້ານເປັນຜູ້ຮັບຜິດຊອບ.
6. ສຳລັບ ສະຖານທີ່ດ່ານສາກົນ, ດ່ານປະເພນີ,ສຳນັກງານໂຄງການແມ່ນມອບໃຫ້ເຈົ້າໜ້າທີ່ ປະຈຳດ່ານເປັນຜູ້ຮັບຜິດຊອບ.
7. ສຳລັບສຳນັກງານໂຄງການຕ່າງໆແມ່ນມອບໃຫ້ເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບ.

**V. ການກຳນົດວັນເວລາການສ້າງຂະບວນການລວມ.**

1. ໃຫ້ເອົາມື້ວັນສຸກ, ອາທິດສຸດທ້າຍຂອງທຸກໆເດືອນເປັນວັນສ້າງຂະບວນການລວມໃນທົ່ວແຂວງ.
   - ສຳລັບພະນັກງານ,ທະຫານ,ຕຳຫຼວດ, ລັດວິສາຫະກິດ, ຫົວໜ່ວຍທຸລະກິດ ຕອນເຊົ້າໃຫ້ໄປດຳເນີນຢູ່ເຮືອນແລະ ບ້ານທີ່ຕົນສັງກັດຢູ່ ແລະ ຕອນແລງໃຫ້ໄປດຳເນີນຢູ່ກົມກອງຕົນເອງ.
   - ສຳລັບປະຊາຊົນ ຕອນເຊົ້າ ໃຫ້ໄປດຳເນີນລວມ ແລະ ຕອນແລງ ໃຫ້ດຳເນີນ ຢູ່ຕາມແຄມເຮືອນ,ໃນເຮືອນຂອງຕົນ.

**VI. ວິທີການ ແລະ ມາດຕາການຈັດຕັ້ງປະຕິບັດ.**

1. ໃຫຫົວໜ້າພະແນກການ ,ອົງການທຽບເທົ່າ,ອົງການຈັດຕັ້ງມະຫາຊົນ ,ຫົວໜ້າກອງບັນຊາການ ປກຊ ຫົວໜ້າກອງບັນຊາການ ປກສ ,ເຈົ້າເມືອງ,ເລຂາຄະນະພັກກຸ່ມບ້ານ,ນ້າຍບ້ານ ເຊື່ອມຊຶມກຳແໜ້ນເນື້ອໃນຄຳສັ່ງສະບັບນີ້ ແລະ ເຜີຍແຜ່ໃຫ້ອ້າຍນ້ອງທີ່ຂື້ນກັບຄວາມຮັບຜິດຊອບຂອງຕົນໃຫ້ທົ່ວເຖິງ.
2. ໃຫ້ແຕ່ລະພາກສ່ວນຫັນເປັນແຜນລະອຽດຂອງຕົນ ເພື່ອຊີ້ນຳຈັດຕັ້ງປະຕິບັດ ໃຫ້ມີຜົນສຳເລັດເປັນຢ່າງດີ . ສຳລັບບັນດາເມືອງຖ້າມີຄວາມຈຳເປັນກໍ່ໃຫ້ຫັນເປັນຄຳສັ່ງຂອງເຈົ້າເມືອງຕື່ມ ເພື່ອໃຫ້ສອດຄ່ອງກັບຈຸດພິເສດ ຂອງແຕ່ລະເມືອງ ແລະ ສະດວກໃນການຊີ້ນຳປະຕິບັດ.
3. ມອບໃຫ້ເຈົ້າເມືອງແຕ່ລະເມືອງກຳນົດຈຸດຖອກຂີ້ເຫຍື້ອສຳລັບເທດສະບານເມືອງ,ພ້ອມນັ້ນກໍ່ໃຫ້ຈັດຕັ້ງຜູ້ບໍລິການກຳຈັດຂີ້ເຫຍື້ອໂດຍຮູບແບບທຸລະກິດ ແລະ ຊີ້ນຳແຕ່ລະບ້ານໃຫ້ມີຈຸດຖິ້ມຂີ້ເຫຍື້ອຂອງບ້ານ.

4. ມອບໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງເປັນໃຈກາງສົມທົບອົງການປົກຄອງເມືອງ ແລະ ໜ່ວຍພະນັກງານກໍ່ສ້າງຮາກຖານ ແຕ່ລະກຸ່ມເພື່ອຕິດຕາມກວດກາ ແລະລາຍງານໃຫ້ຂັ້ນເທິງໃນແຕ່ລະໄລຍະ. ຄຽງຄູ່ກັນນັ້ນ ຕ້ອງສະເໜີໃຫ້ຂັ້ນເທິງປະຕິບັດນະໂຍບາຍ ຍ້ອງຍໍ ຕໍ່ພາກສ່ວນ ທີ່ເຮັດສຳເລັດ ແລະ ມີປະສິດຕິຜົນ, ທັງສະເໜີຂັ້ນເທິງ ປະຕິບັດວິໄນ ຕໍ່ພາກສ່ວນ ທີ່ຝ່າຝືນຢ່າງເຂັ້ມງວດ.

5. ສຳລັບຢູ່ເທດສະບານ ແຂວງແມ່ນມອບໃຫ້ ອົງການ ອພບຕ ແຂວງເປັນຜູ້ຕິດຕາມກວດກາ ແລະ ເຮັດໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ3ຂອງຄຳສັ່ງສະບັບນີ້.

ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ.

ຄຳເຈນ ວົງໂພສີ